**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

E. 2190

ເລກທີ ........./ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ ໒໘.. ພະຈິກ 2014

# <u>ແຈ້ງການ</u>

ເຖິງ: ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງ.

ເລື່ອງ: ຈັດຕັ້ງຜັນຂະຫຍາຍໝາກຜົນກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ IX, ທີ່ເມືອງດຽນບຽນ, ແຂວງດຽນບຽນ, ສສ ຫວຽດນາມ.

- ອີງໃສ່ ບົດບັນທຶກກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ IX, ລົງວັນທີ 26 ກັນຍາ 2014, ທີ່ ເມືອງດຽນບຽນ, ແຂວງດຽນບຽນ, ສສ ຫວຽດນາມ.

ເພື່ອເປັນການຈັດຕັ້ງຜັນຂະຫຍາຍເນື້ອໃນ ຂອງຜົນກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ IX, ທີ່ໄດ້ຈັດຂຶ້ນໃນລະຫວ່າງວັນທີ 25-27 ກັນຍາ 2014 ທີ່ ເມືອງດຽນບຽນ, ແຂວງດຽນບຽນ, ສສ ຫວຽດນາມ ໃຫ້ມີປະສິດທິຜົນ ແລະ ປະກົດຜົນເປັນຈິງ.

**ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ເຖິງ ບັນດາພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງ ໂດຍສະເພາະບັນດາພະແນກທີ່ມີຊາຍແດນຕິດກັບ ສສ ຫວຽດນາມ ດັ່ງນີ້:**

1. ໃຫ້ສົມທົບກັບ ກົມການນຳເຂົ້າ ແລະ ສົ່ງອອກ ແລະ ສະພາການຄ້າ ແລະ ອຸດສາຫະກຳແຂວງ ດຳເນີນການເຜີຍແຜ່ກ່ຽວກັບຂໍ້ຕົກລົງການໃຫ້ບຸລິມະສິດຫຼຸດຜ່ອນອັດຕາພາສີນຳເຂົ້າ 50% ແລະ 0% ລະຫວ່າງ ລາວ ແລະ ຫວຽດນາມ ແລະ ນິຕິກຳອື່ນໆ ລະຫວ່າງ ລາວ-ຫວຽດນາມ ໃຫ້ແກ່ຫົວໜ່ວຍທຸລະກິດ ເພື່ອເປັນການຊຸກຍູ້ໃຫ້ແກ່ການພົວພັນການຄ້າສອງຝ່າຍ ສະເພາະແມ່ນການບັນລຸເປົ້າໝາຍມູນຄ່າການຄ້າ 02 ຕື້ ໂດລາສະຫະ ລັດ ໃນປີ 2015.
2. ໃຫ້ສົມທົບກັບ ກົມການນຳເຂົ້າ ແລະ ສົ່ງອອກ, ບັນດາຂະແໜງການກ່ຽວຂ້ອງພາຍໃນແຂວງ ແລະ ສະພາການຄ້າ ແລະ ອຸດສາຫະກຳແຂວງ ໃນການທົບທວນຄືນການຈັດຕັ້ງປະຕິບັດຂໍ້ຕົກລົງ ຮ່ານອຍ 2007 ກ່ຽວກັບການອຳນວຍຄວາມສະດວກໃຫ້ແກ່ຄົນ, ສິນຄ້າ ແລະ ພາຫະນະຜ່ານດ່ານຊາຍແດນ ລາວ-ຫວຽດນາມ ເພື່ອປຶກສາຫາລືກັບຝ່າຍຫວຽດນາມ.
3. ໃຫ້ສ້າງແຜນງານ-ໂຄງການລະອຽດຂອງແຂວງ (ລວມທັງໂຄງການພື້ນຖານໂຄງລ່າງ) ເພື່ອຜັນຂະຫຍາຍແຜນແມ່ບົດພັດທະນາຕາໜ່າງຕະຫຼາດຊາຍແດນ ລາວ-ຫວຽດນາມ ຮອດປີ 2020 ໂດຍປຶກສາຫາລືກັບ ກົມການນຳເຂົ້າ ແລະ ສົ່ງອອກ, ບັນດາຂະແໜງການພາຍໃນແຂວງ ແລະ ຝ່າຍຫວຽດນາມ ເພື່ອລະດົມ ແລະ ດຶງດູດການລົງທຶນຈາກພາກທຸລະກິດທັງພາຍໃນ ແລະ ຕ່າງປະເທດ ເຂົ້າໄປພັດທະນາຕະຫຼາດຊາຍແດນດັ່ງກ່າວ.

4. ໃຫ້ສົມທົບກັບກົມການນໍາເຂົ້າ ແລະ ສົ່ງອອກ ແລະ ບັນດາຂະແໜງການພາຍໃນແຂວງ ກວດກາຄືນວຽກງານການຄຸ້ມຄອງ ແລະ ສົ່ງເສີມການຄ້າຊາຍແດນ ລາວ-ຫວຽດນາມ ລວມທັງດ້ານນິຕິກໍາ ແລະ ກົນໄກການປະສານງານ.
5. ໃຫ້ສົມທົບກັບກົມການນໍາເຂົ້າ ແລະ ສົ່ງອອກ ແລະ ສະພາການຄ້າ ແລະ ອຸດສາຫະກໍາ ແຂວງ ຂຶ້ນແຜນກະກຽມການເປັນເຈົ້າພາບຈັດກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ X ໃນປີ 2016.
6. ເປັນເຈົ້າການຈັດຕັ້ງປະຕິບັດວຽກງານທີ່ຕິດພັນກັບການຄ້າຊາຍແດນ ແລະ ຕະຫຼາດຊາຍແດນຕາມການຊີ້ນໍາຈາກກະຊວງເປັນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ລັດຖະມົນຕີວ່າການ**
**ກະຊວງອຸດສາຫະກໍາ ແລະ ການຄ້າ**

**ນ. ເຂັມມະນີ ພົນເສນາ**

<u>ບ່ອນສົ່ງ:</u>
- ທ່ານ ລັດຖະມົນຕີຊ່ວຍວ່າການ "ເພື່ອຊາບ"
- ຫ້ອງການ, ສະຖາບັນ, ບັນດາກົມ "ເພື່ອຊາບ"

ຕິດຕໍ່:
ກະຊວງອຸດສາຫະກໍາ ແລະ ການຄ້າ,
ກົມການນໍາເຂົ້າ ແລະ ສົ່ງອອກ
ໂທ/ແຟັກ: 021 454 224
www.laotradeportal.gov.la